# ການສ້າງຕັ້ງລະບົບການສົ່ງເສີມຂັ້ນບ້ານ (VES)

**ການນຳສະເໜີລະບົບການສົ່ງເສີມຂັ້ນບ້ານ** ແມ່ນຢູ່ໃນຮອບວຽນການຝຶກອົບຮົມ ເຊິ່ງແມ່ນຄູຝຶກຂັ້ນສູນກາງເປັນຜູ້ຝຶກ ໂດຍການສະໜັບສະໜູນຈາກ LEAP. ເມື່ອລະບົບໄດ້ຮັບການນຳສະເໜີແລ້ວ, ພະນັກງານຂັ້ນແຂວງ ແລະ ເມືອງຈະນຳໄປປະຕິບັດໃນຂົງເຂດໃດໜຶ່ງຂອງຕົນ ຮ່ວມກັບໂຄງການ. ບາດກ້າວລະອຽດປະກອບດ້ວຍ:





## I. ການວິເຄາະຊີວິດການເປັນຢູ່ໃນແຕ່ລະບ້ານ

ພະນັກງານຂັ້ນເມືອງຈະເຮັດການວິເຄາະສະພາບຊີວິດການເປັນຢູ່ເພື່ອກຳນົດຂໍ້ຈຳກັດ ແລະ ໂອກາດຕ່າງໆ. ການວິເຄາະປະກອບດ້ວຍ: 1. ການເກັບກຳຂໍ້ມູນພື້ນຖານ, 2. ການກຳນົດບັນຫາ, 3. ການກຳນົດໂອກາດດ້ານການຕະຫລາດ, 4. ການກຳນົດຄູ່ຮ່ວມງານຕ່າງໆ ແລະ 5. ການກຳນົດຫົວຂໍ້ໃນການສຶກສາຄົ້ນຄວ້າ. ການວິເຄາະແມ່ນຳດຳເນີນໄປໂດຍການສຳພາດພາກສ່ວນທີ່ກ່ຽວຂ້ອງ ແລະ ການຍ່າງສຳຫລວດພື້ນທີ່ຂອງບ້ານ.

## II. ກອງປະຊຸມວາງແຜນເພື່ອກຳນົດລາຍການສຳລັບສົ່ງເສີມໃນແຕ່ລະກຸ່ມບ້ານ

ພະນັກງານຂັ້ນເມືອງຈະຈັດຕັ້ງກອງປະຊູມການວາງແຜນໃນຂັ້ນເມືອງ. ໃນກອງປະຊູມດັ່ງກ່າວຈະມີການນຳສະເໜີຜົນຂອງການວິເຄາະສິພາບຊີວິດການເປັນຢູ່ໃນຂັ້ນບ້ານ. ຕົວແທນຂອງບ້ານຮ່ວມກັບພະນັກງານຂັ້ນແຂວງ ແລະ ເມືອງຈະຮ່ວມກັນກຳນົດລາຍການຕ່າງໆເພື່ອສົ່ງເສີມໃນແຕ່ລະກູ່ມບ້ານສຳລັບລະດູການໜ້າ. ຈາກນັ້ນຈະໄດ້ມີການພັດທະນາຫລັກສູດສຳລັບລາຍການສົ່ງເສີມດັ່ງກ່າວ ໂດຍຮ່ວມມືກັບຄູ່ຮ່ວມງານຕ່າງໆ (ໂຄງການ, ຜູ້ໃຫ້ທຶນ ແລະ ເອກະຊົນ). ລາຍການສົ່ງເສີມແມ່ນຢູ່ບົນພື້ນຖານບັນຫາ ແລະ ໂອກາດຕົວຈິງທີ່ໄດ້ຈາກການວິເຄາະສະພາບຊີວິດການເປັນຢູ່. ລາຍການສົ່ງເສີມດັ່ງກ່າວຈະສ້າງຕົວເລືອກໃນການຜະລິດໃຫ້ແກ່ຊາວກະສິກອນ ພ້ອມທັງເປັນການຊ່ວຍເປັນທິດທາງໃຫ້ແກ່ລັດຖະບານໃນການປັບປຸງ ການວາງແຜນ ແລະ ຄຸ້ມຄອງການບໍລິການ.

## III. ການກະກຽມເພື່ອສ້າງຕັ້ງລະບົບການສົ່ງເສີມຂັ້ນບ້ານ (VES)

ນັກສົ່ງເສີມຂັ້ນເມືອງຈະຕ້ອງໄດ້ຈັດການຝຶກອົບຮົມໃຫ້ກູ່ມຊາວກະສິກອນຢ່າງເປັນຂັ້ນຕອນ ເທື່ອລະບາດກ້າວ. ນັກສົ່ງເສີມຂັ້ນເມືອງຈະຖືກສ້າງຂຶ້ນໂດຍນຳໃຊ້ຫລັກສູດຂອງ LEA. ພວກເຂົາຈະໄດ້ຮັບການຝຶກອົບຮົມ ແລະ ຕິດຕາມ ໂດຍຄູຝຶກໃນຂັ້ນແຂວງ ທັງໝົດ 4 ຊຸດ. ພາຍຫລັງການຝຶກອົບຮົມແຕ່ລະຊຸດ, ນັກສົ່ງເສີມຂັ້ນເມືອງຈະນຳໃຊ້ບົດຮຽນໃນຂັ້ນບ້ານຈຳນວນໜຶ່ງ ເຊິ່ງນັກສົ່ງເສີມຂັ້ນແຂວງຈະລົງຕິດຕາມຊຸກຍູ້ຢ່າງເປັນປະຈຳ.

ຂະບວນການດັ່ງກ່າວປະກອບດ້ວຍ 6 ເຄື່ອງມື:

### ເຄື່ອງມືທີ 1: ການນຳສະເໜີລະບົບການສົ່ງເສີມຂັ້ນບ້ານ

ເຄື່ອງມືນີ້ຈະຊ່ວຍໃຫ້ນັກສົ່ງເສີມຂັ້ນເມືອງເຂົ້າໃນການ ອະທິບາຍລະບົບ VES ໃຫ້ແກ່ອຳນາດການປົກຄອງບ້ານ. ເຄື່ອງມືດັ່ງກ່າວປະກອບດ້ວຍ 6 ບາດກ້າວ ເຊິ່ງໃຊ້ເວລາປະມານ 90 ນາທີໃນການຈັດຕັ້ງປະຕິບັດຕົວຈິງ. ເຄື່ອງມືຍັງປະກອບດ້ວຍໂພດສເຕີ້ ແລະ ວິດີໂອ. ການນສະເໜີ ລະບົບດັ່ງກ່າວສາມາດເຮັດໄດ້ໃນຂັ້ນກຸ່ມບ້ານ ເຊິ່ງມີຕົວແທນຈາກແຕ່ລະບ້ານທີ່ຈະເຂົ້າຮ່ວມຝຶກອົບຮົມ ໃນລະດູການນີ້ເຂົ້າຮ່ວມ.

### ເຄື່ອງມືທີ 2: ການວິເຄາະຄວາມຕ້ອງການໃນການຝຶກອົບຮົມ – ເຮັດໃຫ້ສັ້ນ ແລະ ງ່າຍດາຍ (TNA-KISS)

ເຄື່ອງມືດັ່ງກ່າວໄດ້ຖືກອອກແບບເພື່ອເອື້ອອຳນວຍໃນການ ຈັດກອງປະຊຸມກັບຊາວບ້ານໂດຍໃຊ້ເວລາສະເລັ່ຍ ເຄິ່ງວັນ. ໃນກອງປະຊຸມ ຊາວກະສິກອນຈະວິເຄາະບັນຫາ, ຈັດບູລິມມະສິດ ແລະ ກຳນົດຄວາມຕ້ອງການໃນການຝຶກອົບຮົມ ເພື່ອແກ້ໄຂບັນຫາ. ຊາວບ້ານກຳນົດສະມາຊິກທີ່ຈະເຂົ້າຮ່ວມຝຶກອົບຮົມ. ເຄື່ອງມືປະກອບດ້ວຍແບບຟອມ ‘ບົດລາຍງານTNA’ ທີ່ນຳໃຊ້ເພື່ອວາງແຜນການຈັດຕັ້ງໂຄງການຝຶກອົບຮົມ.

### ເຄື່ອງມືທີ 3: ການກຳນົດຂໍ້ຈຳກັດ ໃນຂະບວນການຜະລິດ

ເຄື່ອງມືດັ່ງກ່າວໃຊ້ຮ່ວມກັບ TNA-KISS. ໃຊ້ເວລາປະມານ 1 ຊົ່ວໂມງເພື່ອຊ່ວຍຊາວກະສິກອນໃນການກຳນົດສາເຫດຂອງບັນຫາການຜະລິດ. ການວິເຄາະດັ່ງກ່າວຕ້ອງມີທັງຍິງ ແລະ ຊາຍເຂົ້າຮ່ວມຢ່າງພ້ອມໜ້າ.

## IV. ການເລີ້ມຕົ້ນຂະບວນການຝຶກອົບຮົມ

ພະນັກງານຂັ້ນເມືອງເລີ້ມຕົ້ນຈັດຝຶກອົບຮົມໃຫ້ແກ່ຊາວບ້ານ. ຄ້າຍໆກັບການຝຶກອົບຮົມໃຫ້ພະນັກງານເມືອງ, ຊາວບ້ານເອງກໍ່ຈະຖືກຝຶກໃນລັກສະນະດັ່ງກ່າວ ຄື ຈະຝຶກເປັນຂັ້ນຕອນ ເຊິ່ງໃນແຕ່ລະຕອນຈະມີການປະຕິບັດຕົວຈິງທັນທີໃນພື້ນທີ່ການຜະລິດຂອງຊາວບ້ານເອງ. ຫລັກສູດການຝຶກອົບຮົມແມ່ນອີງໃສ່ບັນຫາທີ່ໄດ້ຖືກກຳນົດໄວ້ໂດຍຊາວບ້ານເອງ ໂດຍໄດ້ຄຳນຶງເຖິງລະດັບການສຶກສາ ແລະ ເງື່ອນໄຂຕົວຈິງໃນທ້ອງຖິ່ນເປັນຫລັກ.

### ເຄື່ອງມືທີ 4: ການຕິດຕາມຜົນສຳເລັດ, ການຈັດຕັ້ງປະຕິບັດ, ຂໍ້ຜິດພາດ ແລະ ຄວາມຕ້ອງການທີ່ຈະຝຶກອົບຮົມເພີ້ມ (SIFT)

SIFT ແມ່ນເຄື່ອງມືໃນການປະເມີນຜົນແບບມີສ່ວນຮ່ວມ ເຊິ່ງສະມາຊິກໃນກຸ່ມຜະລິດ ແລະ ອຳນາດການປົກຄອງຂັ້ນບ້ານເປັນຜູ້ນຳໃຊ້. ຜູ້ເຂົ້າຮ່ວມຈະຕີລາຄາຄວາມຄືບໜ້າທຽບໃສ່ຈຸດປະສົງທີ່ໄດ້ຕົກລົງໃນ TNA, ຈາກນັ້ນຕັດສິນໃຈໃນການວາງແຜນສຳລັບຕໍ່ໜ້າ. ການນຳໃຊ້ SIFT ໃຊ້ເວລາປະມານ 90 ເຖິງ 180 ນາທີ.

### ເຄື່ອງມືທີ 5: ການແລກປ່ຽນບົດຮຽນລະຫ່ວາງຊາວກະສິກອນ (FEF)

ເຄື່ອງມື FEF ຊ່ວຍສະມາຊິກກຸ່ມຜະລິດໃນການແລກ ປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເຊິ່ງໃຊ້ເວລາປະມານເຄິ່ງວັນໃນການຈັດຕັ້ງປະຕິບັດ. ໃນກອງປະຊຸມຈະມີການຕີລາຄາຜົນປະໂຫຍດຂອງໂຄງການຝຶກອົບຮົມ ແລະ ຊາວກະສິກອນເອງຈະໄດ້ກຳນົດກິດຈະກຳເພີ້ມເຕີມໃນຕໍ່ໜ້າ. ບົດລາຍງານຂອງ FEF ຈະຖືກນຳໃຊ້ເພື່ອບັນທຶກລາຍຊື່ ຂອງຊາວກະສິກອນຜູ້ໃຫມ່ທີ່ຢາກເຂົ້າຮ່ວມໂຄງການຮຽນຮູ້ອັນໃຫມ່.

### ເຄື່ອງມືທີ 6: ການຂະຫຍາຍຕາໜ່າງການສົ່ງເສີມຂັ້ນບ້ານ (EVES)

ເຄື່ອງມືດັ່ງກ່າວຖືກນຳໃຊ້ໃນຕອນທ້າຍ ຂອງຮອບວຽນ ກິດຈະກຳໃນຂັນບ້ານ ເຊິ່ງໃຊ້ເວລາປະມານເຄິ່ງວັນໃນການຈັດຕັ້ງປະຕິບັດ. ໃນຂະບວນການນີ້, ຊາວບ້ານຈະໄດ້ປະເມີນຜົນໂຄງການຮຽນຮູ້ໃນໄລຍະຜ່ານມາ,ແຕ່ງຕັ້ງ ນັກສົ່ງເສີມຂັ້ນບ້ານເພື່ອເຮັດໜ້າທີ່ ໃນການເອື້ອອຳນວຍການຝຶກອົບຮົມໃນອານາຄັດ ພ້ອມທັງເຮັດໜ້າທີ່ໃນການຄຸ້ມຄອງຂໍ້ມູນຂ່າວສານ. ນອກຈາກນັ້ນຍັງມີການກຳນົດຄວາມຕ້ອງການທີ່ຈະໃຫ້ນັກສົ່ງເສີມຂັ້ນເມືອງມາຊ່ວຍດ້ວຍ.

## V. ກອງປະຊຸມແລກປ່ຽນໃນຂັ້ນກຸ່ມບ້ານ

ເມື່ອລະບົບການສົ່ງເສີມຂັນບ້ານໄດ້ຮັບການສ້າງຕັ້ງຢ່າງສົມບູນແບບໂດຍມີທຸກໆພາກສ່ວນທີ່ກ່ຽວຂ້ອງໃນຂັ້ນບ້ານເຂົ້າຮ່ວມໃນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳ. ກອງປະຊຸມແລກປ່ຽນຂັ້ນກຸ່ມບ້ານ ເຊິ່ງມີຕົວແທນຈາກຂັ້ນບ້ານ, ໂຄງການ, ເອກະຊົນ ແລະ ພະນັກງານຂັ້ນເມືອງເຂົ້າຮ່ວມ ຈະຊ່ວຍໃຫ້ມີການປະສານງານກັນຫລາຍຂື້ນໃນຂັ້ນກຸ່ມບ້ານ, ນອກຈາກນັ້ນ ຍັງເປັນການແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນອີກດ້ວຍ. ໃນກອງປະຊູມດັ່ງກ່າວ ຈະມີການກຳນົດກິດຈະກຳໃນຂັ້ນກຸ່ມບ້ານເຊັ່ນ: ຈັດກິດຈະກຳແລກປ່ຽນບົດຮຽນ, ສ້າງຕັ້ງສູນສົ່ງເສີມ ແລະ ບໍລິການເຕັກນິກຂັ້ນກຸ່ມບ້ານ, ສ້າງກະດານຂ່າວ, ຈັດການວາງສະແດງ ຫລື ຈັດການນຳເຂົ້າປັດໃຈການຜະລິດຮ່ວມກັນເປັນຕົ້ນ.